ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 060 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 02.03.2009

# ດຳລັດ

## ວ່າດ້ວຍການສ້າງຕັ້ງ ເມືອງໄຊສະຖານ ທີ່ຂຶ້ນກັບແຂວງໄຊຍະບູລີ

- ອີງຕາມມາດຕາ 25 ຂອງກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ.
- ອີງຕາມການສະເໜີ ຂອງແຂວງໄຊຍະບູລີ ສະບັບເລກທີ 1441/ຈຂ.ຊຍ, ລົງວັນທີ 18 ສິງຫາ 2008.
- ອີງຕາມໜັງສືສະເໜີ ຂອງທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 21/ທປຄ, ລົງວັນທີ 23 ກຸມພາ 2009.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:**

ມາດຕາ 1: ສ້າງຕັ້ງເມືອງໄຊສະຖານ ທີ່ຂຶ້ນກັບແຂວງໄຊຍະບູລີ ຊຶ່ງປະກອບມີເນື້ອທີ່ທັງໝົດ 925 ຕະລາງກິໂລແມັດ, ມີ 21 ບ້ານ, 1956 ຄອບຄົວ ແລະ ມີພົນລະເມືອງທັງໝົດ 13.429 ຄົນ.

ມາດຕາ 2: ມອບໃຫ້ເຈົ້າແຂວງໆ ໄຊຍະບູລີ ຈັດຕັ້ງປະຕິບັດ ໃຫ້ສອດຄ່ອງ ກັບທີ່ຕັ້ງ ແລະ ຈຸດພິເສດ ຂອງເມືອງດັ່ງກ່າວ.

ມາດຕາ 3: ສຳນັກງານນາຍົກລັດຖະມົນຕີ, ຄະນະຈັດຕັ້ງສູນກາງພັກ, ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ປະຕິບັດ ຕາມດຳລັດສະບັບນີ້.

ມາດຕາ 4: ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ